ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

1535

ເລກທີ ................/ກຂອ.ບຂອ
ນະຄອນຫຼວງວຽງຈັນ, ວັນທີ 10 MAY 2016

# ບົດແນະນຳ

ຮຽນ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.
ເລື່ອງ: ແນະນຳວິທີການນຳໃຊ້ໃບອະນຸຍາດນຳເຂົ້າ, ສົ່ງອອກສິນຄ້າ ສະບັບປັບປຸງໃໝ່.

- ອີງຕາມ ແຈ້ງການກ່ຽວກັບການນຳໃຊ້ໃບອະນຸຍາດນຳເຂົ້າ ແລະ ໃບອະນຸຍາດສົ່ງອອກ ສະບັບປັບປຸງໃໝ່ ເລກທີ 0472/ອຄ.ກຂອ, ລົງວັນທີ 10/3/2016.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ການນຳໃຊ້ໃບອະນຸຍາດນຳເຂົ້າ, ສົ່ງອອກສິນຄ້າ ສະບັບປັບປຸງໃໝ່) ສຳລັບສິນຄ້າທີ່ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຄຸ້ມຄອງ. ທັງນີ້, ກໍ່ເພື່ອໃຫ້ມີຄວາມສະດວກງ່າຍດາຍ, ຫຼຸດຜ່ອນຂັ້ນຕອນການປະກອບເອກະສານໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນ ແລະ ຄ່ອຍຫັນໄປສູ່ການນຳໃຊ້ລະບົບການ ອອກອະນຸຍາດແບບທັນສະໄໝ (E-License) ໃນອະນາຄົດເທື່ອລະກ້າວ. ກົມການນຳເຂົ້າ ແລະ ສົ່ງອອກ ຈຶ່ງສະເໜີໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການເຜີຍແຜ່ ແລະ ຊຸກຍູ້ໃຫ້ຄຳແນະນຳແກ່ຜູ້ປະກອບການ ຈັດຕັ້ງປະຕິບັດການນຳໃຊ້ໃບອະນຸຍາດນຳເຂົ້າ, ສົ່ງອອກສິນຄ້າ ສະບັບປັບປຸງໃໝ່ ດັ່ງນີ້:

1. ຜູ້ຮ້ອງຂໍ ສາມາດດາວໂຫຼດແບບຟອມໃບອະນຸຍາດໄດ້ທີ່ ເວັບໄຊສູນຂໍ້ມູນຂ່າວສານທາງດ້ານການຄ້າ www.laotradeportal.gov.la (ແນະນຳລະອຽດຂັ້ນຕອນການດາວໂຫຼດຄັດຕິດມາພ້ອມ) ຫຼື ສາມາດຂໍສຳເນົາ (Soft File) ໃບອະນຸຍາດນຳເຂົ້າ, ສົ່ງອອກສິນຄ້າ ຈາກໜ່ວຍງານອອກອະນຸຍາດທີ່ຕົນຮ້ອງຂໍ;

2. ໃນກໍລະນີ, ຜູ້ປະກອບການທີ່ຍັງບໍ່ທັນສາມາດນຳໃຊ້ລະບົບການຍື່ນຂໍແບບໃໝ່ໄດ້ ຜູ້ປະກອບການສາມາດສືບຕໍ່ນຳໃຊ້ລະບົບເກົ່າ ຈົນກວ່າຈະມີຄວາມພ້ອມ (ຊ້າສຸດບໍ່ໃຫ້ກາຍວັນທີ 30 ກັນຍາ 2016). ຫຼັງຈາກນັ້ນ, ແມ່ນໃຫ້ຫັນເຂົ້າສູ່ວິທີການຍື່ນໃບອະນຸຍາດນຳເຂົ້າ, ສົ່ງອອກແບບໃໝ່ແທນ;

3. - ຜູ້ຮ້ອງຂໍ ຊຳລະເງິນຄ່າທຳນຽມໃບອະນຸຍາດ ທີ່ຫ້ອງການການເງິນຂອງກະຊວງອຸດສາຫະກຳ ແລະ ການຄ້າ ຕາມສິນຄ້າທີ່ຂັ້ນກະຊວງຄຸ້ມຄອງ ແລະ ຫ້ອງການການເງິນຂອງພະແນກອຸດສາຫະກຳ ແລະ ການຄ້າ ສະເພາະສິນຄ້າທີ່ຂັ້ນແຂວງຄຸ້ມຄອງ;

- ສຳລັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກອະນຸຍາດນຳເຂົ້າ, ສົ່ງອອກ ທີ່ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ແມ່ນໃຫ້ອີງໃສ່ລັດຖະບັນຍັດປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ຖືກຮັບຮອງ ແລະ ປະກາດນຳໃຊ້ໃນແຕ່ລະໄລຍະ.

4. ອາຍຸການນຳໃຊ້ໃບອະນຸຍາດ ແລະ ການເກັບມ້ຽນສຳເນົາໃບອະນຸຍາດ.

| ລ/ດ | ປະເພດໃບອະນຸຍາດ ນຳເຂົ້າ-ສົ່ງອອກ | ອາຍຸການນຳໃຊ້ | ຈຳນວນເອກະສານ ແລະ ການສຳເນົາເກັບມ້ຽນ | | | |
|---|---|---|---|---|---|---|
| | | | ຕົ້ນສະບັບ (ຜູ້ຮ້ອງຂໍ) | ສຳເນົາ | | ລວມຈຳນວນ |
| | | | | ຂາເຂົ້າ-ຂາອອກ | ໜ່ວຍງານອອກອະນຸຍາດ | |
| I | **<u>ຂັ້ນກົມການນຳເຂົ້າ ແລະ ສົ່ງອອກ</u>** | | | | | |
| 1 | ຍານພາຫະນະ/ພາຫະນະຮັບໃຊ້ການຜະລິດທາງກົງ | 90 ວັນ | ✓ | ✓ | ✓ | 3 ສະບັບ |
| 2 | ນ້ຳມັນເຊື້ອໄຟ | 180 ວັນ | ✓ | ✓ | ✓ | 3 ສະບັບ |
| 3 | ອາຍແກັດ | 180 ວັນ | ✓ | ✓ | ✓ | 3 ສະບັບ |
| 4 | ເພັດທາຍາບ | 60 ວັນ | ✓ | ✓ | ✓ | 3 ສະບັບ |
| 5 | ໄມ້ເສົາໄຊ | 90 ວັນ | ✓ | ✓ | ✓ | 3 ສະບັບ |
| II | **<u>ພະແນກອຸດສາຫະກຳ ແລະ ການຄ້າ</u>** | | | | | |
| 1 | ຍານພາຫະນະຮັບໃຊ້ການຜະລິດທາງກົງ | 90 ວັນ | ✓ | ✓ | ✓ | 3 ສະບັບ |
| 2 | ເຫຼັກ, ຊີມັງ | 60 ວັນ | ✓ | ✓ | ✓ | 3 ສະບັບ |
| 3 | ເຂົ້າສານ | 60 ວັນ | ✓ | ✓ | ✓ | 3 ສະບັບ |
| 4 | ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ | 90 ວັນ | ✓ | ✓ | ✓ | 3 ສະບັບ |
| 5 | ສານເຄມີ | 90 ວັນ | ✓ | ✓ | ✓ | 3 ສະບັບ |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມບົດແນະນຳສະບັບນີ້ດ້ວຍ.

ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ກົມການນຳເຂົ້າແລະສົ່ງອອກ

ນ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ປະຈຳແຂວງ, ນະຄອນຫຼວງ.

# ແນະນຳວິທີດາວໂຫຼດ ແລະ ຂັ້ນຕອນການປະກອບຂໍ້ມູນໃສ່ໃບອະນຸຍາດນຳເຂົ້າ, ສົ່ງອອກ

ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກສິນຄ້າ ແມ່ນໜັງສືອະນຸມັດການນຳເຂົ້າສິນຄ້າຈາກຕ່າງປະເທດ ຫຼື ສົ່ງອອກສິນຄ້າໄປຕ່າງປະເທດ ທີ່ຄຸ້ມຄອງໂດຍຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອເປັນການເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການນຳເຂົ້າ, ສົ່ງອອກສາມາດປະກອບຂໍ້ມູນດ້ວຍຕົນເອງ, ຊ່ວຍປະຢັດເວລາ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍທີ່ບໍ່ຈຳເປັນອອກໃນການດຳເນີນການຍື່ນເອກະສານ.

ຄູ່ມືແນະນຳນີ້ ໄດ້ແບ່ງອອກເປັນ 02 ຂັ້ນຕອນ ຄື: ຂັ້ນຕອນການດາວໂຫຼດໃບອະນຸຍາດນຳເຂົ້າ, ສົ່ງອອກແບບງ່າຍດາຍ ແລະ ວິທີການຕື່ມຂໍ້ມູນທີ່ຈຳເປັນໃນໃບອະນຸຍາດນຳເຂົ້າ, ສົ່ງອອກ.

## I. ຂັ້ນຕອນການດາວໂຫຼດໃບອະນຸຍາດນຳເຂົ້າ, ໃບອະນຸຍາດສົ່ງອອກ

ຂັ້ນຕອນການດາວໂຫຼດໃບອະນຸຍາດ ລວມມີສາມຂັ້ນຕອນ ຄື:

**ຂັ້ນຕອນໜຶ່ງ:** ການເຂົ້າສູ່ເວັບໄຊ໌

ທັງສາມເວັບໄຊ໌ຕໍ່ໄປນີ້ ແມ່ນທ່ານສາມາດເລືອກເຂົ້າໄດ້ຢ່າງງ່າຍດາຍ ເຊັ່ນ: www.laotradeportal.gov.la, www.laotrade portal.com, www.laotradeportal.org ພຽງແຕ່ທ່ານກົດເຂົ້າໄປໃນເວັບໄຊ໌ ໜ້າທຳອິດທີ່ທ່ານຈະເຫັນແມ່ນໜ້າຕ້ອນຮັບ ຊຶ່ງທ່ານສາມາດເລືອກເປັນພາສາລາວ ຫຼື ພາສາອັງກິດກໍ່ໄດ້ ເມນູທາງເລືອກດັ່ງກ່າວ ຈະສະແດງໃຫ້ເຫັນຢ່າງຈະແຈ້ງ ດັ່ງພາບລະອຽດລຸ່ມນີ້:



**ຂັ້ນຕອນສອງ:** ດ້ານເທີງຂອງເມນູຫຼັກ ແລ້ວເຂົ້າລະບົບຖານຂໍ້ມູນ ແລ້ວກົດເລືອກເອົາແບບຟອມ



**ຂັ້ນຕອນສາມ:** ເພື່ອເລີ່ມຊອກຫາ ໃບອະນຸຍາດນຳເຂົ້າ ຫຼື ໃບອະນຸຍາດສົ່ງອອກ ໃຫ້ພິມລົງໃນຊ່ອງຄຳສັບ ແລ້ວກົດ Enter ຫຼື ຊອກຫາ ທ່ານກໍ່ຈະປະກົດເຫັນຫົວຂໍ້ຜົນລັບທີ່ທ່ານຕ້ອງການຊອກຫາ ແລ້ວຈຶ່ງກົດໃສ່ຄຳວ່າດາວໂຫຼດ ພາຍຫຼັງທີ່ດາວໂຫຼດມາໄດ້ແລ້ວ ທ່ານຈຶ່ງສາມາດປະກອບຂໍ້ມູນໃສ່ໃບອະນຸຍາດທີ່ສະໜອງໄວ້ໃຫ້.



# ຕົວຢ່າງໃບອະນຸຍາດນຳເຂົ້າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

1 ກົດທີ່ນີ້ເພື່ອເລືອກ

2 Click Here to Select

A ເລກທີ / Ref.no: | 3 ກົດທີ່ນີ້ເພື່ອເລືອກ | 4 Click Here to Select

B ວັນທີ / Date:

## ໃບອະນຸຍາດນຳເຂົ້າ / Import License

5 I. ຂໍ້ມູນຂອງຜູ້ຮ້ອງຂໍ / Applicant Details

ຊື່ / Name: | ໃບສະເໜີ ເລກທີ / Application No: | , ລົງວັນທີ / Date

ທີ່ຢູ່ / Address: ບ້ານ / Village: | ເບີໂທຕັ້ງໂຕະ ຫຼື ມືຖື / Telephone or Mobile:

ເມືອງ / District: | ແຟັກ / Fax:

ແຂວງ / Province: | ອີເມລ໌ / Email:

6 II. ຂໍ້ມູນຂອງຜູ້ສົ່ງອອກ / Exporter Details

ບໍລິສັດ/Company: | ເບີໂທຕັ້ງໂຕະ ຫຼື ມືຖື / Telephone or Mobile:

ທີ່ຢູ່ / Address: | ແຟັກ / Fax:

ປະເທດ / Country: | ອີເມລ໌ / Email:

7 III. ຂໍ້ມູນຂອງຜູ້ຊົມໃຊ້ສຸດທ້າຍ / End User Details

ຊື່ / Name:

ທີ່ຢູ່ / Address: | ເບີໂທຕັ້ງໂຕະ ຫຼື ມືຖື / Telephone or Mobile:

ແຟັກ / Fax:

8 IV. ຂໍ້ມູນການນຳເຂົ້າ / Import Details

- ລະບອບການນຳເຂົ້າ/ Import Regime: ☐ ການນຳເຂົ້າທີ່ຕ້ອງໄດ້ເສຍ ພາສີ ແລະ ອາກອນ / Duty and Tax Payable
  ☐ ການນຳເຂົ້າທີ່ໄດ້ຮັບການຍົກເວັ້ນ ພາສີ ແລະ / ຫຼື ອາກອນ / Duty and / or Tax Exemption
- ປະເພດນຳເຂົ້າ / Type of Import: ☐ ນຳເຂົ້າຖາວອນ / Home Consumption ☐ ນຳເຂົ້າຊົ່ວຄາວ / Temporary
- ກໍລະນີໄດ້ຮັບການຍົກເວັ້ນ, ໃຫ້ຕື່ມຂໍ້ມູນໃສ່ເອກະສານອ້າງອີງ / If Exempt From Duty and/or Tax Exemption, Please Provide Reference:

  ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

  ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

9

| ລຳດັບ No. | ລາຍການສິນຄ້າ Description of Goods | ລະຫັດພາສີ HS Code | ຈຳນວນ ແລະ ຫົວໜ່ວຍ Quantity and Unit | ມູນຄ່າຕໍ່ຫົວໜ່ວຍ Value per Unit | ມູນຄ່າລວມ Total Value |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| ລວມ | | | | | |

10 ດ່ານນຳເຂົ້າ / Customs Clearance Office

C ໃບອະນຸຍາດສະບັບນີ້ມີອາຍຸນຳໃຊ້ຮອດວັນທີ
Import License Valid Until

11 ກົດທີ່ນີ້ເພື່ອເລືອກ

12 Click Here to Select

D ເຊັນ ແລະ ປະທັບກາ

ໝາຍເຫດ / Remark:

1. ຜູ້ຮ້ອງຂໍຕ້ອງຮັບຜິດຊອບຕໍ່ຂໍ້ມູນທີ່ລະບຸໄວ້ໃນໃບອະນຸຍາດສະບັບນີ້.
   Submission Of False Information Shall Result In Penalties.
2. ຫ້າມບໍ່ໃຫ້ມີຮອຍລຶບ, ຮອຍພິມທັບໃສ່ ຫຼື ຮອຍຂີດຂ້າຢ່າງເດັດຂາດ.
   All Information Must Be Typed Without Any Corrections Or Modifications.

# ຕົວຢ່າງໃບອະນຸຍາດສົ່ງອອກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Peace Independence Democracy Unity Prosperity

ກະຊວງອຸດສາຫະກຳ ແລະ ການຄ້າ

Ministry of Industry and Commerce

3 ກົດທີ່ນີ້ເພື່ອເລືອກ

A ເລກທີ / Ref.No:

4 Click Here to Select

1 ກົດທີ່ນີ້ເພື່ອເລືອກ

2 Click Here to Select

B ວັນທີ / Date:

## ໃບອະນຸຍາດສົ່ງອອກ / Export License

5 I. ຂໍ້ມູນຂອງຜູ້ຮ້ອງຂໍ / Export Details

ຊື່ / Name: ໃບສະເໜີ ເລກທີ / Application No: , ລົງວັນທີ / Date:

ທີ່ຢູ່ / Address: ຖະໜົນ / Street: ເບີໂທລະສັບ ຫຼື ມືຖື / Telephone or Mobile:

ບ້ານ / Village: ອີເມລ໌ / Email:

ເມືອງ / District: ແຟັກ / Fax:

6 II. ຂໍ້ມູນຜູ້ຮັບສິນຄ້າປາຍທາງ / Importer Details At Final Destination

ບໍລິສັດ/ Company: ເບີໂທລະສັບ ຫຼື ມືຖື / Telephone or Mobile:

ທີ່ຢູ່ / Address: ແຟັກ / Fax :

ປະເທດ / Country: ອີເມລ໌ / Email:

7 III. ຂໍ້ມູນການສົ່ງອອກ / Export Details

ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

ເອກະສານອ້າງອີງ ເລກທີ / Approval No: ລົງວັນທີ / Date:

8

| ລຳດັບ No. | ລາຍການສິນຄ້າ Description of Goods | ລະຫັດພາສີ HS Code | ຈຳນວນ ແລະ ຫົວໜ່ວຍ Quantity and Unit | ມູນຄ່າຕໍ່ຫົວໜ່ວຍ Value per Unit | ມູນຄ່າລວມ Total Value |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| ລວມ | | | | | |

9 ດ່ານສົ່ງອອກ / Customs Clearance Office

C ໃບອະນຸຍາດສະບັບນີ້ມີອາຍຸນຳໃຊ້ຮອດວັນທີ
Export License Valid Until

ໝາຍເຫດ / Remarks:

1. ຜູ້ຮ້ອງຂໍ ຕ້ອງຮັບຜິດຊອບຕໍ່ຂໍ້ມູນທີ່ລະບຸໄວ້ໃນໃບອະນຸຍາດສະບັບນີ້.
   Submission Of False Information Shall Result In Penalties.
2. ຫ້າມບໍ່ໃຫ້ມີຮອຍລົບ, ຮອຍພິມທັບໃສ່ ຫຼື ຮອຍຂີດຂ້າຢ່າງເດັດຂາດ.
   All Information Must Be Typed Without Any Corrections Or Modifications.

10 ກົດທີ່ນີ້ເພື່ອເລືອກ

11 Click Here to Select

D ເຊັນ ແລະ ປະທັບກາ

## II. ວິທີການຕື່ມຂໍ້ມູນທີ່ຈຳເປັນໃສ່ໃບອະນຸຍາດນຳເຂົ້າ

➢ **ສຳລັບຜູ້ປະກອບການ:**

**ຂໍ້ 1:** ກົດເພື່ອ ▾ ເລືອກຂະແໜງການອອກອະນຸຍາດນຳເຂົ້າ (ພາສາລາວ) ຄື: ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້າ ຢູ່ນະຄອນຫຼວງ ຫຼື ແຂວງ

**ຂໍ້ 2:** ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດນຳເຂົ້າ (ພາສາອັງກິດ) ຄື: Department of Import and Export, Department of Industry and Commerce at Vientiane Capital or Provinces

**ຂໍ້ 3:** ກົດ ▾ ເພື່ອເລືອກຕົວຫຍໍ້ ຂອງຂະແໜງການອອກອະນຸຍາດນຳເຂົ້າ (ເປັນພາສາລາວ) ຕໍ່ຈາກເລກທີ ເຊັ່ນ: ເລກທີ: 1234/**ກຂອ.ບຂອ**, 4567/**ອຄ.ນວ** ເປັນຕົ້ນ...

**ຂໍ້ 4:** ກົດ ▾ ເພື່ອເລືອກຕົວຫຍໍ້ ຂອງຂະແໜງການອອກອະນຸຍາດນຳເຂົ້າ (ເປັນພາສາອັງກິດ) ຕໍ່ຈາກເລກທີ ເຊັ່ນ: Reference Number: 1234/DIMEX.IMEXDIV, 4567/DOIC.VT ເປັນຕົ້ນ...

**ຂໍ້ 5** ຫ້ອງທີ 1 ລະບຸຂໍ້ມູນລະອຽດຂອງຜູ້ຮ້ອງຂໍ ປະກອບມີ: ຊື່, ທີ່ຢູ່, ເລກທີໃບສະເໜີ, ເບີໂທຕິດຕໍ່ ແລະ ອີເມລ໌ ຂອງບໍລິສັດ;

**ຂໍ້ 6** ຫ້ອງທີ 2 ລະບຸຂໍ້ມູນລະອຽດຂອງຜູ້ສົ່ງອອກ ທີ່ເປັນປະເທດຕົ້ນທາງສົ່ງສິນຄ້າ ປະກອບມີ: ຊື່, ທີ່ຢູ່, ປະເທດ ແລະ ອີເມລ໌ ຂອງບໍລິສັດ;

**ຂໍ້ 7** ຫ້ອງທີ 3 ລະບຸຂໍ້ມູນລະອຽດຂອງຜູ້ຊົມໃຊ້ສຸດທ້າຍ ເຊັ່ນ: ອົງການຈັດຕັ້ງສາກົນ ຫຼື ບັນດາໂຄງການຕ່າງໆ ປະກອບມີ: ຊື່, ທີ່ຢູ່ ແລະ ເບີໂທຕິດຕໍ່;

**ຂໍ້ 8** ຫ້ອງທີ 4 ລະບຸຂໍ້ມູນລະອຽດຂອງການນຳເຂົ້າ ໂດຍສາມາດເລືອກ × ໃສ່ຫ້ອງທີ່ເໝາະສົມ ກໍລະນີ ການນຳເຂົ້າທີ່ຕ້ອງເສຍພາສີ ແລະ ອາກອນ, ຫຼື ການນຳເຂົ້າທີ່ໄດ້ຮັບການຍົກເວັ້ນພາສີ ຫຼື ອາກອນ ຫາກໄດ້ຮັບການຍົກເວັ້ນກະລຸນາລະບຸເອກະສານອ້າງອີງລະອຽດ.

- ເລືອກປະເພດນຳເຂົ້າ ເຊັ່ນ: ການນຳເຂົ້າແບບຖາວອນ ຫຼື ນຳເຂົ້າແບບຊົ່ວຄາວຊົ່ວຄາວ

ຂໍ້ 9 ລະບຸລະອຽດ ສຳລັບຊື່ລາຍການສິນຄ້າ ລະບຸໄດ້ທັງພາສາລາວ ແລະ ພາສາອັງກິດ, ລະບຸລະຫັດພາສີທີ່ຖືກຕ້ອງຕາມສາລະບານອັດຕາພາສີ, ຈຳນວນ, ຫົວໜ່ວຍ ແລະ ມູນຄ່າຕໍ່ຫົວໜ່ວຍ ແລະ ມູນຄ່າລວມທັງໝົດ

ຂໍ້ 10 ໃຫ້ລະບຸຊື່ດ່ານນຳເຂົ້າລະອຽດ ເຊັ່ນ: ດ່ານຂົວມິດຕະພາບ 1 ນະຄອນຫຼວງວຽງຈັນ - ໜອງຄາຍ ຫຼື ບັນດາດູ່ດ່ານຊາຍແດນທີ່ມີເຈົ້າໜ້າທີ່ພາສີປະຈຳການ.

ຂໍ້ 11 ກົດ ເພື່ອເລືອກຂະແໜງການອອກອະນຸຍາດນຳເຂົ້າ (ເປັນພາສາລາວ) ເຊັ່ນ: ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ແຂວງ ເປັນຕົ້ນ...

ຂໍ້ 12: ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດນຳເຂົ້າ (ເປັນພາສາອັງກິດ) ເຊັ່ນ: Department of Import and Export, Department of Industry and Commerce of Vientiane Capital, Provinces...

➢ **ສະເພາະເຈົ້າໜ້າທີ່:**

**ຂໍ້ A:** ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງຈຳເລກທີເຊັ່ນ: ເລກທີ: 1234/**ກຂອ.ບຂອ**, 4567/**ອຄ.ນວ** ເປັນຕົ້ນ

**ຂໍ້ B:** ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງຈຳ ວັນ/ເດືອນ/ປີ ມື້ທີ່ອອກອະນຸຍາດ ເຊັ່ນ: 1 JAN 2016

ຂໍ້ C: ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງກໍານົດມື້ໝົດອາຍຸໃບອະນຸຍາດ ໂດຍອີງໃສ່ການກໍານົດຂອງບົດແນະນໍາ ຄັດຕິດມາພ້ອມນີ້ ໃຫ້ພິມ ວັນທີ ເດືອນ ປີ ໃສ່ ເຊັ່ນ: **07 ພຶດສະພາ 2016**

ຂໍ້ D: ເຊັນ ແລະ ປະທັບກາ.

### III. ວິທີການຕື່ມຂໍ້ມູນທີ່ຈໍາເປັນໃນໃບອະນຸຍາດສົ່ງອອກ

➢ **ສະເພາະຜູ້ປະກອບການ:**

ຂໍ້ 1: ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດສົ່ງອອກ (ພາສາລາວ) ຄື: ກົມການນໍາເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກໍາ ແລະ ການຄ້າ ຢູ່ນະຄອນຫຼວງ ຫຼື ແຂວງ

ຂໍ້ 2: ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດສົ່ງອອກ (ພາສາອັງກິດ) ຄື: Department of Import and Export, Department of Industry and Commerce at Vientiane Capital.or Provinces

ຂໍ້ 3: ກົດ ▾ ເພື່ອເລືອກຕົວຫຍໍ້ ຂອງຂະແໜງການອອກອະນຸຍາດນໍາເຂົ້າ (ເປັນພາສາລາວ) ຕໍ່ຈາກເລກທີ ເຊັ່ນ: ເລກທີ: 1234/ກຂອ.ບຂອ, 4567/ອຄ.ນວ ເປັນຕົ້ນ...

ຂໍ້ 4: ກົດ ▾ ເພື່ອເລືອກຕົວຫຍໍ້ ຂອງຂະແໜງການອອກອະນຸຍາດນໍາເຂົ້າ (ເປັນພາສາອັງກິດ) ຕໍ່ຈາກເລກທີ ເຊັ່ນ: Reference Number: 1234/DIMEX.IMEXDIV, 4567/DOIC.VT ເປັນຕົ້ນ...

ຂໍ້ 5 ຫ້ອງທີ 1 ລະບຸຂໍ້ມູນລະອຽດຂອງຜູ້ຮ້ອງຂໍ ປະກອບມີ: ຊື່, ທີ່ຢູ່, ເລກທີໃບສະເໜີ, ເບີໂທຕິດຕໍ່ ແລະ ອີເມລ໌ ຂອງບໍລິສັດ;

ຂໍ້ 6 ຫ້ອງທີ 2 ລະບຸຂໍ້ມູນຜູ້ຮັບສິນຄ້າປາຍທາງ ປະກອບມີ: ຊື່, ທີ່ຢູ່, ປະເທດ ແລະ ອີເມລ໌ ຂອງບໍລິສັດ;

ຂໍ້ 7 ຫ້ອງທີ 3 ລະບຸລະອຽດຂໍ້ມູນການສົ່ງອອກ ກໍລະນີໄດ້ຮັບອນຸຍາດໃຫ້ສົ່ງອອກ ຫຼື ບັນດາເອກະສານອ້າງອີງທີ່ໄດ້ຮັບອະນຸມັດໃຫ້ສົ່ງອອກ;

ຂໍ້ 8 ລະບຸລະອຽດ ສໍາລັບຊື່ລາຍການສິນຄ້າ ໄດ້ທັງພາສາລາວ ແລະ ພາສາອັງກິດ, ລະບຸລະຫັດພາສີທີ່ຖືກຕ້ອງຕາມສາລະບານອັດຕາພາສີ, ຈໍານວນ, ຫົວໜ່ວຍ ແລະ ມູນຄ່າຕໍ່ຫົວໜ່ວຍ ແລະ ມູນຄ່າລວມທັງໝົດ

ຂໍ້ 9 ໃຫ້ລະບຸຊື່ດ່ານສົ່ງອອກລະອຽດ ເຊັ່ນ: ດ່ານຂົວມິດຕະພາບ 1 ນະຄອນຫຼວງວຽງຈັນ - ໜອງຄາຍ ຫຼື ບັນດາຄູ່ດ່ານຊາຍແດນທີ່ມີເຈົ້າໜ້າທີ່ພາສີປະຈໍາການ.

ຂໍ້ 10 ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດສົ່ງອອກ (ເປັນພາສາລາວ) ເຊັ່ນ: ກົມການນໍາເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ, ແຂວງ ເປັນຕົ້ນ....

ຂໍ້ 11: ກົດ ▾ ເພື່ອເລືອກຂະແໜງການອອກອະນຸຍາດສົ່ງອອກ (ເປັນພາສາອັງກິດ) ເຊັ່ນ: Department of Import and Export, Department of Industry and Commerce of Vientiane Capital, Provinces...

➢ **ສະເພາະເຈົ້າໜ້າທີ່:**

ຂໍ້ A: ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງຈໍາເລກທີເຊັ່ນ: ເລກທີ: 1234/ກຂອ.ບຂອ, 4567/ອຄ.ນວ ເປັນຕົ້ນ.

ຂໍ້ B: ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງຈໍາ ວັນ/ເດືອນ/ປີ ມື້ທີ່ອອກອະນຸຍາດ ເຊັ່ນ: 1 JAN 2016.

ຂໍ້ C: ເຈົ້າໜ້າທີ່ຜູ້ອອກອະນຸຍາດ ຈະຕ້ອງກໍານົດມື້ໝົດອາຍຸຂອງໃບອະນຸຍາດ ໂດຍອີງຕາມບົດແນະນໍາ ທີ່ຄັດຕິດມາພ້ອມນີ້ ໃຫ້ພິມ ວັນທີ ເດືອນ ປີ ໃສ່ ເຊັ່ນ: **07 ພຶດສະພາ 2016**

ຂໍ້ D : ເຊັນ ແລະ ປະທັບກາ

⌗ **<u>ສິ່ງທີ່ຄວນເອົາໃຈໃສ່:</u>**

- ☞ ໃບອະນຸຍາດນຳເຂົ້າ, ສົ່ງອອກ ໃຊ້ໄດ້ທັງພາສາລາວ ແລະ ພາສາສາກົນ;
- ☞ ໃບອະນຸຍາດນຳເຂົ້າລົດ ຫຼື ລົດຮັບໃຊ້ການຜະລິດທາງກົງ ແມ່ນຈະຕ້ອງໄດ້ພິມເລກຈັກ ແລະ ເລກຖັງໃສ່ດ້ານຫຼັງຂອງໃບອະນຸຍາດ ພ້ອມທັງລາຍເຊັນ ແລະ ປະທັບກາຂອງບໍລິສັດ;
- ☞ ສຳລັບລົດກົນຈັກໜັກທີ່ຜ່ານການນຳໃຊ້ແລ້ວແມ່ນໃຫ້ລະບຸເພີ່ມລະອຽດໃນຫ້ອງລາຍການສິນຄ້າ.